ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0205/ຄພນ.ພຕສ

ນະຄອນຫຼວງວຽງຈັນ, ວັນທີ 24 Mar 2014

ເຖິງ : ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ

ເລື່ອງ: ການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍຕະຫຼາດ.

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມຂໍ້ຕົກລົງວ່າດ້ວຍຕະຫຼາດຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0903, ລົງວັນທີ 20 ພຶດສະພາ 2013 (ມາດຕາ16).

ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເພື່ອຜັນຂະຫຍາຍມາດຕາ 16 ຂອງຂໍ້ຕົກລົງ ວ່າດ້ວຍຕະຫລາດ ເລກທີ 0903, ລົງວັນທີ 20 ພຶດສະພາ 2013, ກົມການຄ້າພາຍໃນໄດ້ຮ່າງກົດລະບຽບວ່າດ້ວຍ ການຄຸ້ມຄອງຕະຫລາດ ຂັດຕິດມາ ພ້ອມນີ້ ຈຳນວນ 1 ຊຸດ ເພື່ອໃຫ້ຄະນະກຳມະການຈັດສັນ ແລະ ຄຸ້ມຄອງຕະຫຼາດ ແລະ ຜູ້ບໍລິຫານຈັດການຕະຫຼາດ ໃຊ້ເປັນຄູ່ມື ໃນການອອກກົດລະບຽບຄຸ້ມຄອງຕະຫຼາດ.

ຕະຫຼາດຢູ່ໃນການຄຸ້ມຄອງຂອງລັດບໍລິຫານຂັ້ນໃດ ແມ່ນໃຫ້ລັດບໍລິຫານຂັ້ນນັ້ນ (ພະແນກ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າ) ເປັນຜູ້ຢັ້ງຢືນຮັບຮອງກົດລະບຽບດັ່ງກ່າວ.

ສະນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມການຄ້າພາຍໃນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເຫລື່ອມ ຢິ່ງວົງສິດທິ